# INTER-UNIVERSITY COOPERATION PROJECT LAOS-LUXEMBOURG

***CALL FOR APPLICATIONS***

***Research grants***

The University of Luxembourg is proud to announce the opening of applications to select academic staff to undertake research in the field of law from the Faculty of Law and Political Science of the National University of Laos to pursue a research project under the supervision of the Inter-University Cooperation Project Laos-Luxembourg.

## Criteria

The research programme is dedicated to Lao lecturers to improve their academic and research skills in the legal field, in order to strengthen their research capacities and the capacities of the Faculty of Law and Political Science of the National University of Laos. Applicants must be lecturers at the Faculty of Law and Political Science of NUOL, with at least a Bachelor degree in law or with a strong component in law. There are no criteria in terms of age. Candidates will be selected based on merit. The University of Luxembourg will have full discretion in the selection and or rejection of the applications.

In line with the "Luxembourg General Cooperation Strategy for Sustainable Development – Road to 2030", the Inter-University Project welcomes research proposals falling under the following themes:

- Rule of law and governance;
- Fundamental rights;
- Gender equality;
- Environment sustainability and climate protection.

## Supervision

The Project will provide thorough research guidance during the grant period. The selected candidates will be supported to carry out their research and be supervised by the Project through regular meetings to share the progress of their research.

Selected candidates will be required to participate fully in capacity building activities organised by the Inter-University Cooperation (seminars, research workshops, etc) and will be asked to present their research to the public. They will also have to submit

progress reports every 3 months, in accordance with the research contract signed with the University of Luxembourg.

**Administration**

Selected candidates will receive a grant equivalent to 1 200 EUR to complete their research.

The scholarship will be granted by Uni.lu to the lecturer in 4 instalments. Payment of the Uni.lu' scholarship is based on merit and will be conditional on compliance with the obligations of the researcher set up in the "scholarship agreement" including in particular the submission of advancement reports every 3 months to the Liaison Officer of Inter-University Cooperation Project in Vientiane.

The candidates will be entirely responsible for the management of the funding allocated; no extra-costs will be borne by the Project.

The candidates will conduct their research from Lao PDR.

Selected candidates shall ensure that their research complies with the University of Luxembourg procedures, in particular on research ethics and plagiarism and the guideline on Legal Research Methodologies.

The research will take the form of a paper written in English (preferred) or Lao. The length of the final paper will be discussed with the Liaison Officer. The research must be completed within one year from the date of signing the grant contract, and the agreed research outcome submitted.

Applicants can only apply for a funding grant as an individual researcher, not as a team or institution.

**Application**

The preferable language for writing the application is English, but it can also be written in Lao and should encompass:
- A cover letter (not to exceed 2 pages);
- A curriculum vitae with full contact details including academic experience (courses taught, previous research experience, university curriculum, etc);
- A research proposal (not to exceed 3 pages including the bibliography) the research proposal should include a description of the research topic, the hypothesis, research objectives and envisaged methodology as well as a short bibliography (15 references maximum).

**Application deadline**: 26 January 2024

The pre-selected candidates will be invited for an interview.

Applications should be submitted to Paulina BASCHTON: paulina.baschton@ext.uni.lu
and to Patthanaphone NAMMALATH: patthanaphone.nammalath@ext.uni.lu

You can look into our MOOC on Legal Research Methodology to effectively get started to design and conduct good legal research.

# INTER-UNIVERSITY COOPERATION PROJECT
# LAOS-LUXEMBOURG

***CALL FOR APPLICATIONS***

***Research grants (ທຶນຄົ້ນຄວ້າ)***

ມະຫາວິທະຍາໄລລຸກຊໍາບວກ ຍິນດີທີ່ຈະປະກາດວ່າ ພວກເຮົາຈະເປີດຮັບສະໝັກເພື່ອຄັດເລືອກ ພະນັກງານຈາກ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ທີ່ສົນໃຈເຮັດບົດຄົ້ນຄວ້າໃນຂົງເຂດກົດໝາຍ ເພື່ອ ມາດໍາເນີນການຄົ້ນຄວ້າ ພາຍໃຕ້ການຊີ້ນໍາຂອງ ໂຄງການຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ລຸກຊໍາບວກ.

## ເງື່ອນໄຂໃນການສະໝັກ

ທຶນຄົ້ນຄວ້ານີ້ ແມ່ນເນັ້ນໃສ່ ຄູອາຈານລາວ ໃຫ້ພັດທະນາທັກສະໃນທາງດ້ານວິຊາການ ແລະ ທັກສະໃນການ ຄົ້ນຄວ້າ ໃນຂົງເຂດກົດໝາຍ, ເພື່ອສ້າງຄວາມເຂັ້ມແຂງແກ່ຄວາມອາດສາມາດໃນການຄົ້ນຄວ້າຂອງຕົນເອງ ແລະ ຂອງສະຖາບັນ ອັນໄດ້ແກ່ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດລາວ. ຜູ້ສະໝັກຈະຕ້ອງ ເປັນອາຈານຂອງຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ, ຢ່າງໜ້ອຍຕ້ອງ ຈົບການສຶກ ສາລະດັບປະລິນຍາຕີ ໃນສາຂາກົດໝາຍ ຫຼື ມີທັກສະ/ຄວາມຊ່ຽວຊານທາງກົດໝາຍສູງ. ທຶນດັ່ງກ່າວແມ່ນບໍ່ໄດ້ ກໍານົດອາຍຸຜູ້ສະໝັກ. ໂດຍຜູ້ສະໝັກຈະຖືກຄັດເລືອກຕາມຜົນງານທີ່ສົ່ງມາ. ມະຫາວິທະຍາໄລລຸກຊໍາບວກມີສິດ ເດັດຂາດໃນການຄັດເລືອກ ແລະ ຫຼື ການປະຕິເສດຜູ້ສະໝັກ.
ເພື່ອໃຫ້ເປັນໄປຕາມ "ແຜນຍຸດທະສາດການຮ່ວມມືທົ່ວໄປເພື່ອການພັດທະນາທີ່ຍືນຍົງ ຂອງລຸກຊໍາບວກ - ເສັ້ນທາງສູ່ ປີ 2030", ໂຄງການຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ລຸກຊໍາບວກ ເປີດຮັບບົດສະເໜີການ ຄົ້ນຄວ້າທີ່ນອນໃນຫົວຂໍ້ຕ່າງໆລຸ່ມນີ້:

- ລັດແຫ່ງກົດໝາຍ ແລະ ການປົກຄອງ;
- ສິດທິຂັ້ນພື້ນຖານ;
- ຄວາມເທົ່າທຽມທາງເພດ;
- ຄວາມຍືນຍົງທາງສິ່ງແວດລ້ອມ ແລະ ການປົກປ້ອງດິນຟ້າອາກາດ.

**ການຊີ້ນຳບົດ**

ໂຄງການຈະສະໜອງການຊີ້ນຳການຄົ້ນຄວ້າຕະຫຼອດໄລຍະທາງທຶນ. ຜູ້ທີ່ຖືກຮັບເລືອກຈະໄດ້ຮັບການຊ່ວຍເຫຼືອເພື່ອດຳເນີນການຂຽນບົດຄົ້ນຄວ້າ ແລະ ໄດ້ຮັບການຊີ້ນຳບົດຜ່ານ ການພົບປະເປັນປະຈຳເພື່ອສະເໜີຄວາມຄືບໜ້າຂອງການຄົ້ນຄວ້າ.
ຜູ້ສະໝັກທີ່ຖືກຄັດເລືອກ ຈະຕ້ອງໄດ້ເຂົ້າຮ່ວມບັນດາກິດຈະກຳເພື່ອເສີມສ້າງຄວາມອາດສາມາດ ທີ່ຈັດໂດຍໂຄງການຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ລຸກຊຳບວກ (ງານສຳມະນາ, ງານຝຶກອົບຮົມການຄົ້ນຄວ້າ ແລະ ອື່ນໆ) ແລະ ຈະຕ້ອງນຳສະເໜີບົດຄົ້ນຄວ້າຂອງຕົນຕໍ່ສາທາລະນະ ຕາມຄວາມຮຽກຮ້ອງຂອງໂຄງການ. ນອກນີ້, ຍັງຕ້ອງສົ່ງບົດລາຍງານຄວາມຄືບໜ້າທຸກໆ 3 ເດືອນ, ອີງຕາມສັນຍາຄົ້ນຄວ້າ ທີ່ໄດ້ເຊັນໄວ້ກັບທາງມະຫາວິທະຍາໄລລຸກຊຳບວກ.

**ການບໍລິຫານ ແລະ ການເງິນ**

ຜູ້ທີ່ຖືກຄັດເລືອກຈະໄດ້ຮັບທຶນເປັນຈຳເປັນ 1200 EUR ເພື່ອດາເນີນການຄົ້ນຄວ້າໃຫ້ສຳເລັດ.

ທຶນດັ່ງກ່າວ ຈະມອບໃຫ້ໂດຍ ມະຫາວິທະຍາໄລລຸກຊຳບວກ ໂດຍຈະຖືກແບ່ງອອກເປັນ 4 ງວດ. ການເບີກຈ່າຍຂອງມະຫາວິທະຍາໄລລຸກຊຳບວກ ແມ່ນຈະອີງຕາມຜົນງານ ແລະ ຂຶ້ນກັບການປະຕິບັດພັນທະຂອງຜູ້ໄດ້ຮັບທຶນທີ່ໄດ້ລະບຸໄວ້ໃນ “ຂໍ້ຕົກລົງຂອງທຶນ” ທີ” ໂດຍສະເພາະ ພັນທະທີ່ຜູ້ໄດ້ຮັບທຶນຈະຕ້ອງສົ່ງບົດລາຍງານຄວາມຄືບໜ້າ ທຸກໆ 3 ເດືອນ ໃຫ້ແກ່ຜູ້ປະສານງານໂຄງການ ປະຈຳວຽງຈັນ.

ຜູ້ໄດ້ຮັບທຶນ ຈະມີຄວາມຮັບຜິດຊອບເຕັມສ່ວນໃນການບໍລິຫານ-ຈັດງານທຶນທີ່ຕົນເອງໄດ້ຮັບ; ໂດຍໂຄງການຈະບໍ່ມີການສະໜອງທຶນເພີ່ມສຳລັບຄ່າໃຊ້ຈ່າຍເພີ່ມຕື່ມອື່ນໆ.

ຜູ້ໄດ້ຮັບທຶນຈະດຳເນີນການຄົ້ນຄວ້າຢູ່ທີ່ ສປປ ລາວ.

ຜູ້ໄດ້ຮັບທຶນຈະຕ້ອງເຮັດໃຫ້ແນ່ໃຈວ່າຈະດຳເນີນການຄົ້ນຄວ້າໂດຍສອດຄ່ອງກັບຫຼັກການຂອງມະຫາວິທະຍາໄລລຸກຊຳບວກ, ໂດຍສະເພາະ ຈັນຍາບັນການຄົ້ນຄວ້າ ແລະ ການຄັດລອກເອົາຜົນງານຜູ້ອື່ນ ແລະ ອີງໃສ່ ຄູ່ມືແນະນຳກ່ຽວກັບວິທີການຄົ້ນຄວ້າວິທະຍາສາດທາງດ້ານກົດໝາຍ.

ບົດຄົ້ນຄວ້າຈະຢູ່ໃນຮູບແບບຂອງເອກະສານ ທີ່ຖືກຂຽນເປັນພາສາອັງກິດ (ບຸລິມະສິດ) ຫຼື ພາສາລາວກໍໄດ້. ຄວາມຍາວຂອງບົດຄົ້ນຄວ້າໃນຕອນທ້າຍ ແມ່ນຈະຕ້ອງປຶກສາຫາລືຮ່ວມກັນກັບຜູ້ປະສານງານໂຄງການ. ບົດຄົ້ນຄວ້າຈະຕ້ອງສຳເລັດໃນ 1 ປີ ຈາກວັນທີເຊັນສັນຍາຮັບທຶນ, ແລະ ຜົນການຄົ້ນຄວ້າທີ່ຕົກລົງຮ່ວມກັນ.

ຜູ້ສະໝັກຈະສາມາດສະໝັກຮັບທຶນ ຄົ້ນຄວ້າແບບດ່ຽວ/ຄົນດຽວເທົ່ານັ້ນ ບໍ່ສາມາດເຮັດເປັນທີມ ຫຼື ສະຖາບັນໄດ້.

**ການສະໝັກ**

ສໍາລັບການສະໝັກນີ້ແມ່ນຖ້າຜູ້ສະໝັກສາມາດເຮັດເປັນພາສາອັງກິດໄດ້ກໍເປັນການດີ ແຕ່ກໍສາມາດສົ່ງເປັນພາສາລາວໄດ້ເຊັ່ນກັນ ເຊິ່ງຕ້ອງປະກອບມີເອກະສານຕ່າງໆຄື:

- Cover Letter(ໜັງສືເພື່ອສະແດງເຈດຈານົງເຖິງເຫດຜົນທີ່ຢາກສະໝັກ ແລະ ເຫດຜົນທີ່ທ່ານສົມຄວນຈະໄດ້ຮັບທຶນ- ບໍ່ໃຫ້ກາຍ 2 ໜ້າ)
- ຊີວະປະຫວັດຫຍໍ້ ໂດຍປະກອບມີຊ່ອງທາງການຕິດຕໍ່ ໂດຍລະອຽດ, ປະສົບການທາງດ້ານວິຊາການ (ວິຊາສອນ, ປະສົບການການຄົ້ນຄວ້າ, ປະກອບການໃນຫຼັກສູດຂອງມະຫາວິທະຍາໄລ ແລະອື່ນໆ);
- ໜັງສືສະເໜີການຄົ້ນຄວ້າ (ບໍ່ກາຍ 3 ໜ້າ ລວມບັນຈະນານຸກົມ) ໜັງສືສະເໜີການຄົ້ນຄວ້າຄວນປະກອບມີ ຄໍາອະທິບາຍຂອງຫົວຂໍ້ການຄົ້ນຄວ້າ (ພາກສະເໜີ), ສົມມຸດຖານການຄົ້ນຄວ້າ, ວັດຖູປະສົງການຄົ້ນຄວ້າ ແລະ ວິທີການຄົ້ນຄວ້າ ແລະ ບັນຈະນານຸກົມ (ສູງສຸດ 15 ເອກະສານ).

ປິດຮັບສະໝັກ: ວັນທີ 24 ມັງກອນ 2023

ຜູ້ທີ່ຖືກຄັດເລືອກໃນຮອບທໍາອິດ ຈະຖືກເຊີນເຂົ້າສໍາພາດ.

ສົ່ງເອກະສານການສະໝັກຕ້ອງສົ່ງມາຫາ Paulina BASCHTON: paulina.baschton@ext.uni.lu
ແລະ Patthanaphone NAMMALATH: patthanaphone.nammalath@ext.uni.lu

ທ່ານສາມາດເຂົ້າເບິ່ງ ບົດຮຽນອອນລາຍກ່ຽວກັບວິທີການຄົ້ນຄວ້າວິທະຍາສາດທາງດ້ານກົດໝາຍ ເພື່ອເລີ່ມການອອກແບບ ແລະ ດໍາເນີນການຄົ້ນຄວ້າທາງດ້ານກົດໝາຍຢ່າງມີປະສິດທິພາບ